ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ: 15 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 05.01.2017

# ດຳລັດ
# ວ່າດ້ວຍການປະກອບ ແລະ ຄຸ້ມຄອງລົດປະຈຳຕຳແໜ່ງພະນັກງານການນຳລະດັບສູງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບປັບປຸງ ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານເປີດກ້ວາງ ສະບັບເລກທີ 12/ລບ, ລົງວັນທີ 20 ທັນວາ 2016;
- ອີງຕາມ ການສະເໜີຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0015/ກງ, ລົງວັນທີ 4 ມັງກອນ 2017.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດລະບຽບການປະກອບ ແລະ ຄຸ້ມຄອງລົດປະຈຳຕຳແໜ່ງພະນັກງານການນຳລະດັບສູງປະເພດ I ຫາ IV ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ແກ່ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໃຫ້ມີຄວາມເປັນເອກະພາບ ແລະ ລວມສູນ; ອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂ ໃຫ້ພະນັກງານການນຳລະດັບສູງເຮັດສຳເລັດໜ້າທີ່ວຽກງານທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້ ແນ່ໃສ່ປະຕິບັດນະໂຍບາຍປະຢັດແຫ່ງຊາດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ທາງດ້ານເສດຖະກິດ-ສັງຄົມ ຂອງປະເທດເຮົາ.

**ມາດຕາ 2 ລົດປະຈຳຕຳແໜ່ງ**

ລົດປະຈຳຕຳແໜ່ງ ແມ່ນຊັບສົມບັດລວມທີ່ການຈັດຕັ້ງຂອງລັດ ປະກອບໃຫ້ພະນັກງານການນຳລະດັບສູງ, ຊຶ່ງດຳລົງຕຳແໜ່ງບໍລິຫານການປົກຄອງ ເປັນຜູ້ຄຸ້ມຄອງ-ນຳໃຊ້ ເຂົ້າໃນວຽກງານທາງລັດຖະການ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ ເຂົ້າໃນວຽກງານທຸລະກິດສ່ວນຕົວ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການນໍາ** ໝາຍເຖິງພະນັກງານການນໍາລະດັບສູງ ທີ່ດໍາລົງຕໍາແໜ່ງນໍາພາ, ຄຸ້ມຄອງວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຢູ່ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.
2. **ຕໍາແໜ່ງບໍລິຫານການປົກຄອງຂອງພະນັກງານການນໍາລະດັບສູງ ປະເພດ I** ປະກອບມີ ປະທານປະເທດ ຄວບຕໍາແໜ່ງເລຂາທິການໃຫຍ່, ປະທານປະເທດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ ແລະ ກໍາມະການກົມການເມືອງສູນກາງພັກ.
3. **ຕໍາແໜ່ງບໍລິຫານການປົກຄອງຂອງພະນັກງານການນໍາລະດັບສູງ ປະເພດ II** ປະກອບມີ ເລຂາທິການສູນກາງພັກ, ຮອງປະທານປະເທດ, ຮອງປະທານສະພາແຫ່ງຊາດ ແລະ ຮອງນາຍົກລັດຖະມົນຕີ.
4. **ຕໍາແໜ່ງບໍລິຫານການປົກຄອງຂອງພະນັກງານການນໍາລະດັບສູງ ປະເພດ III** ປະກອບມີ ກໍາມະການສູນກາງພັກ, ຫົວໜ້າຄະນະຂອງພັກ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ, ປະທານກໍາມາທິການ ແລະ ເລຂາທິການສະພາແຫ່ງຊາດ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສູນກາງແນວລາວສ້າງຊາດ, ປະທານ ຫຼື ເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເລຂາຄະນະພັກນະຄອນຫລວງ, ເລຂາຄະນະພັກແຂວງ, ເຈົ້າຄອງນະຄອນຫລວງ, ເຈົ້າແຂວງ, ປະທານສະພາປະຊາຊົນຂັ້ນນະຄອນຫລວງ ແລະ ຂັ້ນແຂວງ.
5. **ຕໍາແໜ່ງບໍລິຫານການປົກຄອງຂອງພະນັກງານການນໍາລະດັບສູງ ປະເພດ IV** ປະກອບມີ ກໍາມະການສໍາຮອງສູນກາງພັກ, ຮອງຫົວໜ້າຄະນະຂອງພັກ, ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຮອງປະທານກໍາມາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານອົງການກວດສອບແຫ່ງລັດ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງປະທານສູນກາງແນວລາວສ້າງຊາດ, ຮອງປະທານ ຫຼື ຮອງເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຮອງເລຂາຄະນະພັກນະຄອນຫລວງ, ຮອງເລຂາຄະນະພັກແຂວງ, ຮອງເຈົ້າຄອງນະຄອນຫລວງ ແລະ ຮອງເຈົ້າແຂວງ.

**ມາດຕາ 4 ຂອບເຂດການນໍາໃຊ້ດໍາລັດ**

ດໍາລັດສະບັບນີ້ ໃຊ້ສໍາລັບ ພະນັກງານການນໍາລະດັບສູງປະເພດ I ຫາ IV ທີ່ດໍາລົງຕໍາແໜ່ງບໍລິຫານການປົກຄອງໃນອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງໃນຂອບເຂດທົ່ວປະເທດ.

ສໍາລັບການປະກອບ ແລະ ຄຸ້ມຄອງພາຫະນະສໍາລັບຕໍາແໜ່ງພະນັກງານບໍລິຫານລະດັບສູງ ແລະ ວິຊາການຕ່າງໆຈະມີການຄົ້ນຄວ້າສະເພາະຕ່າງຫາກ.

## ໝວດທີ II
## ການປະກອບ, ຄຸ້ມຄອງ, ນໍາໃຊ້ ແລະ ບໍາລຸງຮັກສາ ລົດປະຈໍາຕໍາແໜ່ງ

**ມາດຕາ 5 ລະບຽບການປະກອບ, ຄຸ້ມຄອງ ແລະ ນໍາໃຊ້ລົດປະຈໍາຕໍາແໜ່ງ**

ລະບຽບການປະກອບ, ຄຸ້ມຄອງ ແລະ ນໍາໃຊ້ລົດປະຈໍາຕໍາແໜ່ງ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ເມື່ອການນໍາທ່ານໃດໜຶ່ງ ໄດ້ຮັບຕໍາແໜ່ງໃໝ່ ໃຫ້ປະຕິບັດການປະກອບລົດ ປະຈໍາຕໍາແໜ່ງ ໂດຍອີງຕາມຕໍາແໜ່ງບໍລິຫານການປົກຄອງ;
- ເມື່ອການນໍາທ່ານໃດໜຶ່ງ ພົ້ນຕໍາແໜ່ງຕ່າງໆທີ່ໄດ້ບັນຍັດໄວ້ຢູ່ໃນມາດຕາ 3 ໃຫ້ປະຕິບັດການຖອນລົດປະຈໍາຕໍາແໜ່ງ (ລົດເກັ່ງ) ໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີທີ່ມີໜ້າທີ່ຄຸ້ມຄອງ. ສໍາລັບການຖອນລົດປະຈໍາຕໍາແໜ່ງການນໍາລະດັບສູງ ປະເພດ I, II ແລະ III ໃຫ້ຖອນຄືນຄັນໃດຄັນໜຶ່ງຕາມທີ່ໄດ້ບັນຍັດໄວ້ຢູ່

ໃນມາດຕາ 6 ຂອງດຳລັດສະບັບນີ້. ສ່ວນທີ່ເຫລືອໃຫ້ປະຕິບັດນະໂຍບາຍອື່ນໆ (ຕີລາຄາປະເມີນຂາຍ ຫຼື ມອບເປັນຂອງຂວັນ) ໃຫ້ຜູ້ພົ້ນຕຳແໜ່ງ ຕາມການຕົກລົງຂອງຂັ້ນເທິງ;

- ການປະກອບ ແລະ ການນຳໃຊ້ລົດປະຈຳຕຳແໜ່ງ ແມ່ນໃຫ້ດຳເນີນ ຕາມລະບອບຕຳແໜ່ງດຽວ, ຊຶ່ງເປັນຕຳແໜ່ງສູງສຸດ ຂອງພະນັກງານການນຳລະດັບສູງ (ສຳລັບຜູ້ທີ່ຄອບຫຼາຍຕຳແໜ່ງ);

- ເມື່ອການນຳທ່ານໃດໜຶ່ງ ໄດ້ຮັບການສັບຊ້ອນ, ໝູນວຽນ ແລະ ຍົກຍ້າຍ ໄປຮັບໜ້າທີ່ໃໝ່ທີ່ເທົ່າກັບຕຳແໜ່ງເກົ່າໃຫ້ສືບຕໍ່ນຳໃຊ້ລົດປະຈຳຕຳແໜ່ງ ຕາມທີ່ໄດ້ປະກອບໃຫ້ໃນຜ່ານມາ. ກໍລະນີທີ່ໄປຮັບໜ້າໃໝ່ທີ່ສູງກວ່າ ຫລື ຕ່ຳກວ່າຕຳແໜ່ງເກົ່າ ໃຫ້ຖອນລົດຕາມທີ່ໄດ້ປະກອບຜ່ານມາ ແລະ ໃຫ້ປະຕິບັດຕາມການປະກອບລົດປະຈຳຕຳແໜ່ງໃໝ່.

**ມາດຕາ 6 ການປະກອບລົດປະຈຳຕຳແໜ່ງ**

ການປະກອບລົດປະຈຳຕຳແໜ່ງການນຳລະດັບສູງ ໃຫ້ປະຕິບັດ ດັ່ງນີ້:

**6.1.** ການນຳລະດັບສູງປະເພດ I ໃຫ້ປະກອບລົດປະຈຳຕຳແໜ່ງ ຈຳນວນ 3 ຄັນ ດັ່ງນີ້:

- ລົດປະຈຳຕຳແໜ່ງປະເພດລົດເກັງ 1 ຄັນ ຄວາມແຮງບໍ່ເກີນ 3.500 ຊີຊີ.
- ລົດສຳຮອງປະເພດລົດຈີບ 1 ຄັນ ຄວາມແຮງບໍ່ເກີນ 4.500 ຊີຊີ.
- ລົດຮັບໃຊ້ປະເພດລົດກະບະ 4 ປະຕູ 1 ຄັນ ຄວາມແຮງບໍ່ເກີນ 3.500 ຊີຊີ.
- ປະກອບນ້ຳມັນແລ່ນວຽກພາຍໃນ ໃຫ້ທັງໝົດ 500 ລິດ ຕໍ່ໜຶ່ງເດືອນ.

**6.2.** ການນຳລະດັບສູງປະເພດ II ໃຫ້ປະກອບລົດປະຈຳຕຳແໜ່ງ ຈຳນວນ 2 ຄັນ ດັ່ງນີ້:

- ລົດປະຈຳຕຳແໜ່ງປະເພດລົດເກັງ 1 ຄັນ ຄວາມແຮງບໍ່ເກີນ 3.000 ຊີຊີ.
- ລົດຮັບໃຊ້ປະເພດລົດຈີບ 1 ຄັນ ຄວາມແຮງບໍ່ເກີນ 4.500 ຊີຊີ.
- ປະກອບນ້ຳມັນແລ່ນວຽກພາຍໃນ ໃຫ້ທັງໝົດ 350 ລິດ ຕໍ່ໜຶ່ງເດືອນ.

**6.3.** ການນຳລະດັບສູງປະເພດ III ໃຫ້ປະກອບລົດປະຈຳຕຳແໜ່ງ ຈຳນວນ 2 ຄັນ ດັ່ງນີ້:

- ລົດປະຈຳຕຳແໜ່ງປະເພດລົດເກັງ 1 ຄັນ ຄວາມແຮງບໍ່ເກີນ 2.500 ຊີຊີ.
- ລົດຮັບໃຊ້ປະເພດລົດກະບະ 1 ຄັນ ຄວາມແຮງບໍ່ເກີນ 2.500 ຊີຊີ.
- ປະກອບນ້ຳມັນແລ່ນວຽກພາຍໃນ ໃຫ້ 300 ລິດ ຕໍ່ໜຶ່ງເດືອນ.

**6.4.** ການນຳລະດັບສູງປະເພດ IV ໃຫ້ປະກອບລົດປະຈຳຕຳແໜ່ງ ຈຳນວນ 1 ຄັນ ດັ່ງນີ້:

- ລົດປະຈຳຕຳແໜ່ງປະເພດລົດເກັງ 1 ຄັນ ຄວາມແຮງບໍ່ເກີນ 2.000 ຊີຊີ.
- ປະກອບນ້ຳມັນແລ່ນວຽກພາຍໃນ ໃຫ້ 200 ລິດ ຕໍ່ໜຶ່ງເດືອນ.

**6.5.** ການນຳລະດັບສູງປະເພດ III ແລະ IV ໃຫ້ປະກອບເປັນລົດລວມຮັບໃຊ້ໃນການລົງເຄື່ອນໄຫວທ້ອງຖິ່ນຂອງອົງການຈັດຕັ້ງພັກ-ລັດຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນນະຄອນຫລວງ ແລະ ຂັ້ນແຂວງ ອົງການລະບໍ່ເກີນ 3 ຄັນ.

- ລົດຮັບໃຊ້ປະເພດລົດຈີບ 1 ຄັນ ຄວາມແຮງບໍ່ເກີນ 4.500 ຊີຊີ ແລະ ປະເພດລົດຈີບ 2 ຄັນ ຄວາມແຮງບໍ່ເກີນ 3.500 ຊີຊີ.
- ກໍລະນີທີ່ພາກສ່ວນໃດມີຫລາຍກວ່ານີ້ ໃຫ້ປະຕິບັດການຖອນເພື່ອປະກອບ ຫຼື ຊື້ໃໝ່ໃຫ້ພາກສ່ວນອື່ນທີ່ບໍ່ມີ.
- ມອບໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ປົກປັກຮັກສາລວມໄວ້ຢູ່ສຳນັກງານອົງການຕົນ, ບໍ່ອະນຸຍາດປະກອບເປັນລົດປະຈຳຕຳແໜ່ງສະເພາະການນຳ (ປະເພດ III ແລະ IV) ທ່ານໃດໜຶ່ງອີກ.

**ມາດຕາ 7 ການປະກອບລົດປະຈຳຕຳແໜ່ງ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງການເງິນ ເປັນຜູ້ຄົ້ນຄ້ວາ ປະກອບ, ຖອນ ແລະ ຂຶ້ນບັນຊີຄຸ້ມຄອງລົດປະຈຳຕຳແໜ່ງການນຳລະດັບສູງ ແຕ່ລະປະເພດ, ພ້ອມທັງອອກຄຳແນະນຳລະອຽດໃນ

ການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບສະພາບຕົວຈິງ ດ້ານເສດຖະກິດ-ການເງິນ ແລະ ຕໍາແໜ່ງພະນັກງານການນໍາລະດັບສູງໃນປະຈຸບັນຂອງປະເທດ.

**ມາດຕາ 8 ອາຍຸການນໍາໃຊ້ ແລະ ການບໍາລຸງຮັກສາ**

ລົດປະຈໍາຕໍາແໜ່ງການນໍາ ທີ່ມີອາຍຸການນໍາໃຊ້ ໂດຍສະເລັ່ຍ **10** ປີ ຫລື ຮອດໄລຍະ 150.000 ກິໂລແມັດ ໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສົມທົບກັບກະຊວງການເງິນ ຊື້ໃໝ່, ຖອນ, ຈັດສັນນໍາໃຊ້ເຂົ້າໃນເປົ້າໝາຍໃໝ່ ແລະ ຊໍາລະສະສາງ ຕາມລະບຽບການ.

ແຕ່ລະປີໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ການນໍາສັງກັດຢູ່ ເປັນຜູ້ຮັບຜິດຊອບຂຶ້ນແຜນງົບປະມານບໍາລຸງຮັກສາ, ສ້ອມແປງ; ຄຸ້ມຄອງ ແລະ ປົກປັກຮັກສາລົດປະຈໍາຕໍາແໜ່ງການນໍາຕາມລະບຽບການ.

## ໝວດທີ III
## ການຕິດຕາມກວດກາ ແລະ ປະເມີນຜົນ

**ມາດຕາ 9 ການກວດກາລົດປະຈໍາຕໍາແໜ່ງ**

ມອບໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ ກະຊວງການເງິນ ປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ດໍາເນີນການຕິດຕາມກວດກາຄືນ ການປະກອບລົດ ປະຈໍາຕໍາແໜ່ງໃນໄລຍະຜ່ານມາ ແລະ ຄົ້ນຄ້ວາການປະກອບລົດປະຈໍາຕໍາແໜ່ງຄືນໃໝ່ ໃຫ້ຖືກຕ້ອງ ຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ການປະເມີນຜົນ**

ອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ການນໍາສັງກັດຢູ່ ເປັນຜູ້ຮັບຜິດຊອບໃນການປະເມີນຜົນການຈັດຕັ້ງປະຕິບັດການປະກອບລົດປະຈໍາຕໍາແໜ່ງພະນັກງານການນໍາລະດັບສູງ ແລະ ລາຍງານໃຫ້ຫ້ອງວ່າການສໍານັກງານນາຍົກລັດ ຖະມົນຕີ ແລະ ກະຊວງການເງິນ ເພື່ອລາຍງານຕໍ່ລັດຖະບານແຕ່ລະໄລຍະ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

ພະນັກງານການນໍາລະດັບສູງປະເພດ I ຫາ IV ທີ່ດໍາລົງຕໍາແໜ່ງບໍລິຫານການປົກຄອງໃນອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດໍາລັດສະບັບນີ້ ປ່ຽນແທນດໍາລັດ ສະບັບເລກທີ 81/ນຍ, ລົງວັນທີ 07 ພຶດສະພາ 2001 ວ່າດ້ວຍການປະກອບ ແລະ ຄຸ້ມຄອງລົດປະຈໍາຕໍາແໜ່ງການນໍາ.

ດໍາລັດ ຫຼື ຂໍ້ກໍານົດອື່ນ ກ່ຽວກັບການປະກອບລົດປະຈໍາຕໍາແໜ່ງ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກລຶບລ້າງ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ... ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ